# ນິຍາມ ແລະ ຄວາມໝາຍ ການຮັບປະກັນຄຸນະພາບການສຶກສາ

## ຄວາມໝາຍ

1. **ຄຸນະພາບການສຶກສາ** (Quality of Education) : ໝາຍເຖິງ ຄວາມເປັນເລີດຂອງການສຶກສາຕາມ ມາດຕະຖານ ຈຸດປະສົງ ແລະ ເປົ້າໝາຍຂອງການສຶກສາ.
2. **ຄຸນະພາບການສຶກສາ**(Quality) : ໝາຍເຖິງຄຸນລັກສະນະທີ່ເພິ່ງປະສົງຕາມຄາດໝາຍ,ຈຸດປະສົງທີ່ວາງໄວ້,ຕາມພາລະກິດຂອງການຈັດການ ສຶກສາ,ຕາມນະໂຍບາຍ,ຕາມບົດບາດຂອງແຕ່ລະສະຖານສຶສາ.
3. **ມີນັກວິຊາການຫຼາຍທ່ານໄດ້ໃຫ້ຄຳນິຍາມຄວາມໝາຍຂອງຄຳວ່າ :(ຄຸນະພາບການສຶກສາ)ເຊັ່ນ** ທ່ານ Baumgart (1987 : 81-85) ໄດ້ກ່າວເຖິງຄຸນະພາບການສຶກສາວ່າຂຶ້ນກັບມູມມອງໃນການ ໃຫ້ຄຳນິຍາມ ຫາກເປັນມູມມອງຂອງນັກເສດຖະສາດກໍຈະຕ້ອງມອງວ່າຄື : ຜົນຜະລິດນັກຮຽນ-ນັກສຶກສາທີ່ຈົບການສຶກສາອອກໄປເປັນຄວາມຕ້ອງການຂອງຕະຫຼາດຫຼາຍໜ້ອຍພຽງໃດ ? ຫາກບໍ່ສອດຄ່ອງ ກັບຄວາມຕ້ອງການຂອງຕະຫຼາດກຖືວ່າບໍ່ກຸ້ມຄ່າກັບການລົງທຶນ ຊຶ່ງຖືວ່າຄຸນະພາບຕ່ຳ.ສ່ວນມູມມອງທາງ ດ້ານສັງຄົມວິທະຍາຈະພິຈາລະນາວ່າ ສະຖານສຶກສາ ໄດ້ຕອບສະໜອງໃຫ້ກັບສັງຄົມໄດ້ດີພຽງໃດ ? ສະ ຖານສຶກສາ ຫຼື ສະຖາບັນການສຶກສາທີ່ມີຊື່ ສຽງເປັນສະຖາບັນທີ່ມີຄຸນະພາບ, ສຳລັບມູມມອງຂອງນັກການ ສຶກສາຈະ ພິຈາລະນາຈາກຄວາມສາມາດ ຂອງຜູ້ຮຽນຈົບການສຶກສາໃນການແກ້ໄຂບັນຫາ ແລະ ການວິເຄາະ,ວິຈານ ສິ່ງເລົ່ານີ້ເກີດຈາກຂະບວນການຮຽນ - ການສອນທີ່ມີປະສິດທິຜົນ ແລະ ປະສິດທິພາບ.
4. **ທ່ານ Whatmough** (1994 : 94-95) ໄດ້ກ່າວວ່າຄຸນະພາບການສຶກສາເປັນການພິຈາລະນາ ຄຸນະພາບຈາກທັດສະນະຂອງບຸກຄົນ 2 ກຸ່ມ ນັ້ນຄື :ຜູ້ມາຮັບບໍລິການ ນັກຮຽນ-ນັກສຶກສາ ຫາກການ ຈັດການຂອງສະຖານສຶກສາສາມາດເຮັດໃຫ້ຜູ້ມາຮັບບໍລິການເກີດຄວາມພໍໃຈ ກໍໝາຍຄວາມວ່າ ມີຄຸນະ ພາບຕາມທັດສະນະທີໜຶ່ງ,ນອກຈາກນັ້ນການຈັດການສຶກສາຕ້ອງສອດຄ່ອງ ແລະ ເປັນໄປຕາມ ຫຼັກການ ຈຸດປະສົງ ແລະ ຈຸດໝາຍຂອງການກໍ່ສ້າງອີກດ້ວຍ,ຊຶ່ງປະເດັນນີ້ຈະກ່ຽວຂ້ອງກັບຄວາມເພິ່ງພໍໃຈຕາມ ທັດສະນະຂອງນັກການສຶກສາ .
5. **ດັ່ງນັ້ນຈຶ່ງສະຫຼຸບໄດ້ວ່າ** : ຄຸນະພາບການສຶກສາ ໝາຍເຖິງ ຄຸນລັກສະນະຂອງຜູ້ຮຽນ ແລະ ວິທີການ ຈັດການສຶກສາຂອງສະຖານສຶກສາທີ່ເຮັດໃຫ້ຜູ້ປົກຄອງ ແລະ ຜູ້ມີສ່ວນໄດ້ສ່ວນເສັຍທັງຫຼາຍ ມີຄວາມ ເຊື່ອໝັ້ນ ຫຼື ເພິ່ງພໍໃຈນັ້ນເອງ .

## 6. ຄຸນະພາບການສຶກສາພິຈາລະນາຈາກສິ່ງໃດ ?

ການພິຈາລະນາຄຸນະພາບການສຶກສາສາມາດພິຈາລະນາໄດ້ຕາມ 2 ແນວທາງດັ່ງນີ້ :

1. ຄຸນະພາບການສຶກສາທີ່ພິຈາລະນາຈາກຕົວຜູ້ຮຽນໄດ້ແກ່ :ຄຸນສົມບັດສຶກສາ,ປັນຍາສຶກສາ,ພະລະສຶກສາ,ສິລະປະສຶກສາ ແລະ ຄວາມສາມາດໃນການອອກແຮງງານ.

2. ຄຸນະພາບການສຶກສາທີ່ພິຈາລະນາຈາກວິທີການຈັດການສຶກສາໄດ້ແກ່ : ຜູ້ບໍລິຫານ,ຄູສອນ ແລະ ປັດໃຈສິ່ງອຳນວຍຄວາມສະດວກ.

## 7. ການຈັດການຄຸນະພາບການສຶກສາແມ່ນຫຍັງ ?

ການຈັດການຄຸນະພາບການສຶກສາປະກອບດ້ວຍ 2 ຄຳສັບຄື ການຈັດການ ແລະ ຄຸນະພາບການສຶກສາ ດັ່ງນັ້ນການຈັດການຄຸນະພາບການສຶກສາຈຶ່ງໝາຍເຖິງ ຂະບວນການເຮັດວຽກຮ່ວມກັນລະຫວ່າງຜູ້ບໍລິຫານ ສະຖານສຶກສາ,ຄູ ແລະ ບຸກຄະລາກອນທຸກຄົນທີ່ມີສ່ວນກ່ຽວຂ້ອງເພື່ອໃຫ້ໄດ້ມາເຊິ່ງຄຸນ ລັກສະນະ ຂອງຜູ້ຮຽນ ແລະ ວິທີການຈັດການສຶກສາ,ເຮັດໃຫ້ທຸກຝ່າຍເກີດຄວາມໝັ້ນໃຈຕໍ່ສະຖານສຶກສາ.

## 8. ຫຼັກການພື້ນຖານ ແລະ ລະບົບການຈັດການຄຸນະພາບການສຶກສາ

ການຈັດການຄຸນະພາບການສຶກສາມີພື້ນຖານມາຈາກຫຼັກການຄວບຄຸມ(Controlling)ເຊິ່ງເປັນໜ້າທີ່ຫຼັກສຳຄັນປະການໜຶ່ງໃນການບໍລິຫານຈັດການສະຖານສຶກສາໃຫ້ມີຄຸນະພາບ (ເບິ່ງຕາມຮູບແຕ້ມ)

## 9. ການຮັບປະກັນຄຸນະພາບການສຶກສາ (Quality Assurance): ໝາຍເຖິງການຮັບຮອງ ແລະ ຢັ້ງຢືນຜົ-ຂອງການສຶກສາ (ຜົນຜະລິດຂອງການສຶກສາ) ປະຕິບັດໃດ້ຕາມມາດຕະຖານການສຶກສາແຫ່ງຊາດ, ເພື່ອ ສ້າງຄວາມໝັ້ນໃຈຕໍ່ສັງຄົມ,ຊຸມຊົນ ແລະ ຜູ້ປົກຄອງ.

## 10. ການຮັບປະກັນຄຸນະພາບການສຶກສາ : ໝາຍເຖິງການມີລະບົບ ແລະ ກົນໄກໃນການຄວບຄຸມກວດສອບ ແລະ ປະເມີນການດຳເນີນງານໃນແຕ່ລະອົງປະກອບຂອງຄຸນະພາບຕາມຕົວຊີ້ວັດຕາມເກນທີ່ໄດ້ກຳນົດ ເພື່ອເປັນຫຼັກປະກັນໃຫ້ຜູ້ມີວ່ວນກ່ຽວຂ້ອງ ແລະ ສາທາລະນະຊົນໄດ້ໝັ້ນໃຈວ່າສະຖານສຶກສານັ້ນສາມາດໃຫ້ຜົນຜະລິດທາງການສຶກສາທີ່ມີຄຸນະພາບ.

ຊຶ່ງການນິຍາດັ່ງກ່າວ ການປະ ກັນ ຄຸນະພາບການສຶກສາຈຶ່ງເປັນການບໍລິຫານ ຈັດການຂອງສະຖານສຶກສາ ໃນການສ້າງຂັ້ນຕອນການດຳເນີນງານຕ່າງໆ ທີ່ມີຄວາມສຳພັນ ແລະ ເຊື່ອມຍົງກັນຢ່າງເປັນລະບົບ ໂດຍອາໃສບຸກຄະລາກອນ ຊັບພະຍາກອນ ກົດເກນ ມາດຕະ ການ ທິດທາງປະຕິບັດ ແລະ ປັດໃຈຕ່າງໆ ເພື່ອໃຫ້ເກີດຜົນຜະລິດທີ່ມີຄຸນະພາບ .

## 11. ການປະກັນຄຸນະພາບພາຍໃນ : (Internal Evaluation) ແມ່ນການວັດຜົນ, ປະເມີນຜົນ, ຕິດຕາມ ແລະ ກວດສອບ ຄຸນະພາບການສຶກສາ ຂອງສະຖານສຶກສາ,ຕາມມາດຕະຖານການສຶກສາທີ່ໄດ້

ກຳ ນົດ. ຈາກໜ່ວຍງານຮັບຜິດຊອບພາຍໃນຂອງສະຖານສຶກສາ, ກົມວິຊາການ, ພະແນກ ສຶກສາແຂວງ ແລະ ຫ້ອງການສຶກສາເມືອງ ທີ່ມີໜ້າທີ່ຮັບຜິດຊອບສະຖານສຶກສານັ້ນ.

12. ການປະກັນຄຸນະພາບພາຍນອກ : (External Evaluation) ແມ່ນການປະເມີນຜົນ, ການຕິດ ຕາມ ກວດສອບ ຄຸນນະພາບ ສຶກສາຂອງສະຖານສຶກສາ,ຕາມມາດຕະຖານການ ທີ່ໄດ້ກຳນົດ ໂດຍໜ່ວຍ ງານ, ຜູ້ຊ່ຽວຊານ , ຜູ້ຊົງຄຸນວຸດທິ, ຜູ້ບໍລິຫານທີ່ມີຄວາມຊຳນານ ທັງພາຍໃນ ແລະ ຕ່າງປະເທດ ຕາມການ ເຊີນຂອງກະຊວງສຶກສາທິການເພື່ອໃຫ້ມີຄວາມໂປ່ງໃສ,ເປັນທຳ,ມີຄວາມຊັດເຈນ, ສາມາດ ເຊື່ອມໂຍງກັບ ພາກພື້ນ ແລະ ສາກົນ ເທື່ອລະກ້າວ ເພື່ອເປັນທີ່ຍອມຮັບຂອງສັງຄົມ ແລະ ຊຸມຊົນ.

13. ມາດຕະຖານການສຶກສາ (Standard) : ໝາຍເຖິງຂໍ້ກຳນົດກ່ຽວກັບບັນທັດຖານ, ຕົວຊີ້ວັດ, ເກນ,ວິທີ ການວັດແທກຄຸນນະພາບການສຶກສາ.

14. ມາດຕະຖານການສຶກສາ : ໝາຍເຖິງ ຂໍ້ກຳນົດທີ່ກ່ຽວກັບຄຸນລັກສະນະທີ່ຕ້ອງການໃຫ້ເກີດຂຶ້ນ ໃນສະຖານສຶກສາທຸກແຫ່ງ ແລະ ໃຊ້ເປັນ ຫຼັກຖານໃນການທຽບຄຽງ,,ການສົ່ງເສີມ, ການກຳ ກັບດູແລ,ການກວດສອບ,ການປະເມີນຜົນ ແລະ ການປະກັນຄຸນະພາບການສຶກສາ.

15. ການຄວບຄຸມຄຸນະພາບການສຶກສາ (Quality Control) ໝາຍເຖິງການມີລະບົບແລະ ກົນໄກໃນແຕ່ລະອົງປະກອບຄຸນະພາບເພື່ອກຳກັບການດຳເນີນງານຂອງສະຖານສຶກສາ ໃຫ້ ໄດ້ຜົນຕາມດັດສະນີ (ຕົວຊີ້ວັດ)ຄຸນະພາບທີ່ກຳນົດ

16. ການກວດສອບຄຸນະພາບການສຶກສາ (Quality Auditing) ໝາຍເຖິງຂະບວນ ການວິ ເຄາະວ່າສະຖານສຶກສາມີລະບົບ ແລະ ກົນໄກກຳກັບການຄວບຄຸມຄຸນະພາບ ແລະ ໄດ້ປະຕິ ບັດເກີດຜົນຕາມລະບົບ ແລະ ກົນໄກດັ່ງກ່າວ . ຫຼືເວົ້າອີກຢ່າງໜຶ່ງວ່າ : ຄືຂະບວນການເພື່ອຕັດ ສິນວ່າສະຖານສຶກສາໄດ້ຈັດໃຫ້ມີລະບົບແລະກົນໄກຕາມທີ່ແຈ້ງໄວ້ວ່າຈະທຳ ແລະໄດ້ເຮັດຫຼືບໍ່ ?

17. ການປະເມີນ ຄຸນະພາບການສຶກສາ (Quality Assessment) ການປະເມີນຄຸນະພາບການສຶກສາເປັນຂະບວນການທີ່ຕໍ່ເນື່ອງມາຈາກການກວດສອບຄຸນະພາບ,ການວິເຄ າະປຽບທຽບຜົນດຳ ເນີນງານຂອງສະຖານສຶກສາດ້ານມາດຕະຖານແລະ ຕົວຊີ້ວັດຄຸນະ ພາບໃນທຸກອົງປະກອບຂອງຄຸນະພາບວ່າສະຖານສຶກສານັ້ນດຳເນີນງານຕາມເກນແລະ ມາດຕະຖານການສຶກສາທີ່ກຳນົດຫຼາຍໜ້ອຍພຽງໃດ ? ໂດຍພາບລວມແລ້ວເມື່ອໄດ້ມີການໃຊ້ລະບົບ ການປະກັນຄຸນະພາບແລ້ວ ສະຖານສຶກສາໄດ້ມີການປ່ຽນແປງເຊີງຄຸນະພາບຫຼາຍໜ້ອຍພຽງໃດ ?

18. ການປະເມີນ ຄຸນະພາບການສຶກສາ (Quality Assessment) ໝາຍເຖິງ ຂະບວນ ການ ວິເຄາະ ແລະ ປຽບທຽບຜົນການດຳເນີນງານຂອງສະຖານສຶກສາວ່າ ສົ່ງຜົນຕໍ່ ຄຸນະພາບການ ສຶກສາຕາມດັດສະນີ / ຕົວຊີ້ວັດຫຼືບໍ່ ?

19. ອົງປະກອບຄຸນະພາບ : ໝາຍເຖິງ ປັດໃຈຫຼັກໃນການດຳເນີນງານຂອງສະຖານສຶກສາ ທີ່ມີຜົນຕໍ່ຄຸນະພາບການສຶກສາ.

20. ດັດສະນີ / ຕົວຊີ້ວັດບົ່ງບອກຄຸນະພາບການສຶກສາ : ໝາຍເຖິງຕົວຊີ້ວັດວ່າ ການດຳເນີນງານໃນແຕ່ລະອົງປະກອບຄຸນະພາບເປັນໄປຕາມເກນ ແລະ ມາດຕະຖານການສຶກສາທີ່ກຳນົດ

21. ຜົນຜະລິດທາງການສຶກສາ : ໝາຍເຖິງ ຜົນການດຳເນີນຕາມພະລະກິດຫຼັກ ຂອງສະຖານ ສຶກສາ ປະກອບດ້ວຍ ການຜະລິດນັກຮຽນ-ນັກສຶກສາ,ການຄົ້ນຄ້ວາວິໃຈ, ການບໍລິຫານ ດ້ານວິຊາການ,ການບຳລຸງປົກປັກຮັກສາພະເພນີວັດທະນະທຳຂອງຊາດ ແລະ ພາລະກິດອື່ນໆ ຕາມບົດບາດຂອງສະຖານສຶກສາ .

22. ລາຍງານການສຶກສາຂອງຕົນ (Self Study Report) ໝາຍເຖິງ ການຈັດທຳລາຍງານໃຫ້ຊາບວ່າສະພາບການດຳເນີນງານເປັນໄປຕາມເກນ ແລະ ຕົວຊີ້ວັດຄຸນະພາບການສຶກສາ ໃນ ທຸກອົງປະກອບທີ່ກຳນົດຂຶ້ນຫຼືບໍ່ ເພື່ອເປັນຂໍ້ມູນໃນການພັດທະນາການເຮັດວຽກໃຫ້ດີຂຶ້ນ ຢ່າງ ຕໍ່ເນື່ອງ .

23. ລາຍງານການປະເມີນຕົນເອງ (Self Assessment Report) ໝາຍເຖິງ ການຈັດ ທຳ ລາຍງານແບບເນັ້ນການວິເຄາະ ປຽບທຽບຜົນການດຳເນີນງານຂອງໜ່ວຍງານ ກັບຕົວຊີ້ວັດ ຄຸນະພາບໃນທຸກອົງປະກອບວ່າການດຳເນີນງານເປັນໄປຕາມເກນທີ່ກຳນົດຫຼາຍໜ້ອຍພຽງໃດ ? ໂດຍຈັດເປັນລະດັບຂອງການບັນລຸເປົ້າໝາຍ .

24. ລະບົບ ແລະ ກົນໄກ : ໝາຍເຖິງ ຂັ້ນຕອນການດຳເນີນງານຕ່າງໆ ທີ່ມີຄວາມສຳພັນກັນ ແລະ ເຊື່ອມຍົງຢ່າງເປັນລະບົບ ໂດຍອາໃສບຸກຄະລາກອນ ຊັພະຍາກອນ ກົດເກນ ມາດຕະ ການ ແນວທາງປະຕິບັດ ແລະ ປັດໃຈຕ່າງໆ ເປັນກົນໄກໃຫ້ການດຳເນີນງານບັນລຸເປົ້າໝາຍ.

25. ການຮັບຮອງມາດຕະຖານຄຸນະພາບ : ຜົນການປະເມີນມາດຕະຖານຄຸນນະພາບການສຶກສາ ຈາກພາຍໃນ ແລະ ພາຍນອກ ຫາກປະຕິບັດໄດ້ຕາມມາດຕະຖານ ແລະ ຜ່ານເກນທີ່ກຳນົດ ແມ່ນຈະຖືກຮັບຮອງໂດຍອົງການຮັບຮອງມາດຖານຄຸນນະພາບແຫ່ງຊາດ(ໃບຍັ້ງຢືນ,ໂລໂກ,ປະກາດ..).

26. ວົງຈອນການປະກັນຄຸນະພາບການສຶກສາ :

1. ເຜີຍແຜ່ນິຕິກຳກ່ຽວກັບມາດຕະຖານສຶກສາເພື່ອຮັບຮອງຄຸນະພາບການສຶກສາຂັ້ນຮຽນຕ່າງໆ
2. ສະຖານສຶກສາສະໝັກເຂົ້າຮ່ວມການປະກັນຄຸນະພາບຕໍ່ໜ່ວຍງານຕົ້ນສັງກັດ
3. ໃຫ້ການຝຶກອົບຮົມແນະນຳການນຳໃຊ້ເອກະສານທີ່ກ່ຽວຂ້ອງເຖິງການປະກັນຄຸນະພາບຕາມມາດຕະຖານ ທີ່ກະຊວງສຶກສາໄດ້ອະນຸມັດ.
4. ສະຖານສຶກສາດຳເນີນການປະເມີນພາຍໃນຕາມມາດຕະຖານ ແລະ ຕົວຊີ້ວັດດ້ານຄຸນະພາບທີ່ໄດ້ກຳນົດ ແລ້ວ ສະຫຼຸບລາຍງານໃຫ້ໜ່ວຍງານຕົ້ນສັງກັດເພື່ອກວດສອບ.

5. ໜ່ວຍງານຕົ້ນສັງກັດກວດສອບຖ້າຜ່ານແມ່ນສົ່ງຕໍ່ໃຫ້ກົມວິຊາການທີ່ກ່ຽວຂ້ອງເພື່ອນໍາສະເໜີຄະນະກໍາມະການຮັບຮອງມາດຕະຖານແຫ່ງຊາດພິຈາລະນາຮັບຮອງ.

## ລະບົບການຈັດການຄຸນະພາບການສຶກສາ

**ມາດຕະຖານແລະແຜນການທໍາງານ,ການວັດຜົນ-ປະເມີນຜົນ,ການປະຕິບັດງານ,ການແກ້ໄຂບັນຫາ**

| ຊັບພະຍາກອນທີ່ຈໍາເປັນ<br>Input | ⟺ | ຂະບວນການຈັດການສຶກສາ<br>Process | ⟺ | ຜົນຜະລິດທາງການສຶກສາ<br>Output |
|---|---|---|---|---|
| - ຜູ້ບໍລິຫານ<br>- ຄູຜູ້ສອນ<br>- ນັກຮຽນ<br>- ວັດສະດຸອຸປະກອນ<br>- ອາຄານສະຖານທີ່<br>- ສິ່ງແວດລ້ອມ | | - ການພັດທະນາຫຼັກສູດ<br>- ການຈັດການຮຽນ-ການສອນ<br>- ການຈັດກິດຈະກໍາເສີມ<br>- ການວັດ ແລະ ປະເມີນຜົນ<br>- ການປະກັນຄຸນະພາບ<br>- ການຮັບຄຸນະພາບສະຖານສຶກສາ | | - ຄຸນລັກສະນະຂອງຜູ້ຮຽນ<br>- ການບັນລຸຈຸດໝາຍກໍ່ສ້າງ<br>- ຄວາມເພິ່ງພໍໃຈຂອງຜູ້ປົກຄອງ,ສັງຄົມ,ຊຸມຊົນ<br>- ຄວາມຈະເລີນເຕີບໂຕ<br>- ຄວາມສາມາດດ້ານການແຂ່ງຂັນ |

# ແນວທາງການດຳເນີນຄຸນະພາບການສຶກສາ

